

## ພິທີເປີດຫລັກສູດຊັ້ນສູງຕໍ່ເນື່ອງສາຂາ " ເຈາະສຳຫຼວດ "

ພິທີເປີດຫລັກສູດຊັ້ນສູງຕໍ່ເນື່ອງສາຂາ " ເຈາະສຳຫຼວດ " ໄດ້ເປີດຂຶ້ນຢ່າງເປັນທາງການ ຢູ່ທີ່ວິທະຍາໄລເຕັກນິກສັບພະວິຊາ ໃນຕອນເຊົ້າ ຂອງວັນທີ 23 ມີຖຸນາ 2011 ເວລາ 10:00 ໂມງ ໂດຍມີທ່ານບຸນຄົງ ຫຼ້າສຸກັນ ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມເຂົ້າຮ່ວມ, ມີຜູ້ຕາງໜ້າຈາກກະຊວງສຶກສາທິການ ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນທີ່ກ່ຽວຂ້ອງ, ວິທະຍາໄລເຕັກນິກສັບພະວິຊາໄດ້ຮ່ວມມືກັບ ບໍລິສັດຜາແດງ ອິນດັດສຕຼີ ປະເທດລາວຈຳກັດ ເປີດຫລັກສູດຊັ້ນສູງຕໍ່ເນື່ອງສາຂາ " ເຈາະສຳຫຼວດ" ເປັນຫຼັກສູດວິຊາການຂຸດຄົ້ນ ແລະ ເຈາະສຳຫຼວດລະບົບຊັ້ນສູງຕໍ່ເນື່ອງ ເຊິ່ງຈະຮັບເອົານັກສຶກສາທີ່ຮຽນຈົບຊັ້ນກາງ ເຂົ້າມາຮຽນຕໍ່ຊັ້ນສູງ. ມາເຖິງປະຈຸບັນ ຫຼັກສູດວິຊາການຂຸດຄົ້ນ ແລະ ສຳຫຼວດ ດັ່ງກ່າວ ແມ່ນໄດ້ຮັບອະນຸມັດ ຈາກກະຊວງສຶກສາທິການ ຂອງສ.ປ.ປ ລາວ ຕາມຂໍ້ຕົກລົງ ເລກທີ 52/ສສ.ອສ.11 ເຊິ່ງຫຼັກສູດຕໍ່ເນື່ອງນີ້ລວມມີ 66 ໜ່ວຍກິດ, ໃນນີ້ໝວດວິຊາຄວາມຮູ້ທົ່ວໄປມີ 15 ໜ່ວຍກິດ, ໝວດວິຊາເຕັກນິກທົ່ວໄປມີ 17 ໜ່ວຍກິດ, ໝວດວິຊາສະເພາະມີ 31 ໜ່ວຍກິດ ແລະ ໝວດວິຊາເລຂາມີ 3 ໜ່ວຍກິດ ໂດຍຈະໃຊ້ເວລາຮຽນທັງໝົດ 1 ປີ ກັບ 6 ເດືອນ, ເຊິ່ງເປັນຫຼັກສູດຮຽນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ ເຊິ່ງຈະມີກຳນົດຮຽນພາກທິດສະດີຢູ່ທີ່ ວິທະຍາໄລ ເຕັກນິກສັບພະວິຊາ ແລະ ປະຕິບັດຕົວຈິງ ຢູ່ທີ່ບໍລິສັດຜາແດງ ອິນດັດສຕຼີ ປະເທດລາວຈຳກັດ, ຫຼັກສູດດັ່ງກ່າວນີ້ຈະເປັນຕົວແທນໃຫ້ກັບບໍລິສັດອື່ນໆ ທີ່ມາລົງທຶນໃນ ສ.ປ.ປ ລາວ ເຊິ່ງມີສ່ວນຮ່ວມໃນການພັດທະນາຊັບພະຍາກອນມະນຸດ ໃນ ສ.ປ.ປ ລາວ